ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 3373../ກປ

ນະຄອນຫຼວງວຽງຈັນ, ວັນທີ 14. ທັນວາ 2016

# ຄຳສັ່ງ

## ກ່ຽວກັບການຢຸດຕິຊົ່ວຄາວ ການສີດພົ່ນຢາຂ້າເຊື້ອພາຫະນະທົ່ວໄປທີ່ເຂົ້າມາ ສປປ ລາວ

ເຖິງ:
- ທ່ານ ຫົວໜ້າກົມປູກຝັງ;
- ທ່ານ ຫົວໜ້າກົມລ້ຽງສັດ ແລະການປະມົງ;
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ;
- ທ່ານ ຫົວໜ້າເຈົ້າໜ້າທີ່ກັກກັນພືດ ແລະຫົວໜ້າເຈົ້າໜ້າທີ່ສັດຕະວັດແພດ ປະຈຳດ່ານສາກົນ ໃນຂອບເຂດທົ່ວປະເທດ.

– ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ເລກທີ 03/ສພຊ, ລົງວັນທີ 25 ກໍລະກົດ 2008;
– ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນພືດ ເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
– ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1809/ຫສນຍ.ກສສ, ລົງວັນທີ 17 ພະຈິກ 2016.

ໃນໄລຍະຜ່ານມາ, ການນຳໃຊ້ມາດຕະການສີດພົ່ນຢາຂ້າເຊື້ອຍານພາຫະນະທີ່ເຂົ້າມາ ສປປ ລາວ ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການ ປ້ອງກັນ, ສະກັດກັ້ນ ແລະຫຼຸດຜ່ອນຄວາມສ່ຽງຕໍ່ການແຜ່ລະບາດຂອງເຊື້ອພະຍາດສັດ ແລະສັດຕູພືດ ທີ່ອາດປົນເປື້ອນຕິດມາກັບຍານພາຫະນະ ຈາກພາຍນອກ ເຂົ້າມາແຜ່ລະບາດຢູ່ພາຍໃນ ສປປ ລາວ ພວກເຮົາ.

ເພື່ອຮັບປະກັນ ດ້ານປະສິດທິຜົນ, ບົນພື້ນຖານຄວາມສອດຄ່ອງດ້ານຫຼັກວິຊາການ ນັ້ນ,

## ລັດຖະມົນຕີ ກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ:

1. ໃຫ້ ຢຸດຕິຊົ່ວຄາວການສີດພົ່ນຢາຂ້າເຊື້ອພາຫະນະທົ່ວໄປ ທີ່ບໍ່ໄດ້ຂົນສົ່ງສັດ, ຜະລິດຕະພັນສັດ ຫຼືພືດ, ຜະລິດຕະພັນພືດ ຢູ່ບັນດາດ່ານຊາຍແດນໃນຂອບເຂດທົ່ວປະເທດ ຈົນກວ່າຈະໄດ້ຮັບແຈ້ງການຢ່າງເປັນທາງການຈາກ ກະຊວງກະສິກຳ ແລະປ່າໄມ້;
2. ສຳລັບພາຫະນະຂົນສົ່ງສະເພາະ ສັດ, ຜະລິດຕະພັນສັດ, ພືດ ຫຼືຜະລິດຕະພັນພືດ ທີ່ເຂົ້າມາ ສປປ ລາວ

ແມ່ນອະນຸຍາດໃຫ້ສີດພົ່ນຕາມຫຼັກວິຊາການ;

3. ໃຫ້ຢຸດເຊົາ ການເກັບຄ່າບໍລິການ ສີດພົ່ນຢາຂ້າເຊື້ອໃສ່ພາຫະນະທຸກປະເພດທີ່ເຂົ້າມາ ສປປ ລາວ (ພາຫະນະທົ່ວໄປ ແລະພາຫະນະຂົນສົ່ງ ສັດ, ຜະລິດຕະພັນສັດ, ພືດ ຫຼືຜະລິດຕະພັນພືດ);

4. ໃນໄລຍະຢຸດຕິຊົ່ວຄາວນີ້, ໃຫ້ ກົມປູກຝັງ ແລະກົມລ້ຽງສັດ ແລະການປະມົງ ສົມທົບກັບ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ເອົາໃຈໃສ່ປະຕິບັດບາງວຽກຈຸດສຸມ ດັ່ງນີ້:
   4.1. ສຳລັບ ເຈົ້າໜ້າທີ່ກັກກັນພືດ ແລະເຈົ້າໜ້າທີ່ສັດຕະວະແພດ ປະຈຳດ່ານ ແມ່ນໃຫ້ສືບຕໍ່ປະຕິບັດການກວດກາ ສັດ ແລະພືດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ;
   4.2. ສືບຕໍ່ບົວລະບັດຮັກສາ ເຄື່ອງມືອຸປະກອນ ເປັນຕົ້ນ ເຄື່ອງສີດພົ່ນຢາຂ້າເຊື້ອພາຫະນະ ໃຫ້ຢູ່ໃນສະພາບຮັບປະກັນໃຊ້ງານໄດ້;
   4.3. ສຳລັບດ່ານທີ່ຍັງບໍ່ທັນໄດ້ມາດຕະຖານນັ້ນ ໃຫ້ສ້າງເປັນໂຄງການ ເພື່ອນຳສະເໜີຂັ້ນເທິງພິຈາລະນາອະນຸມັດຈັດຕັ້ງປະຕິບັດ;
   4.4. ຂຶ້ນແຜນງົບປະມານ ເພື່ອຈັດຊື້ຢາ (ສຳລັບສີດພົ່ນ), ຄ່າສິ້ນເປືອງອື່ນໆ ເພື່ອກະກຽມແຜນສຸກເສີນ ກຽມພ້ອມຮັບມືໃນກໍລະນີທີ່ມີການລະບາດຂອງພະຍາດສັດ ຫຼືພືດ.

5. ໃຫ້ ກົມປູກຝັງ ແລະກົມລ້ຽງສັດ ແລະການປະມົງ ເປັນເຈົ້າການ ຕິດຕາມ, ປະເມີນຄວາມສ່ຽງ ແລະເຝົ້າລະວັງສະພາບການລະບາດຂອງສັດຕູພືດ ແລະພະຍາດສັດ ຢູ່ບັນດາປະເທດໃກ້ຄຽງ, ຂົງເຂດ, ພາກພື້ນ ແລະສາກົນ ຢ່າງໃກ້ຊິດ. ໃນກໍລະນີມີຄວາມຈຳເປັນຕ້ອງໄດ້ປະຕິບັດມາດຕະການສີດພົ່ນຢາຂ້າເຊື້ອຍານພາຫະນະທົ່ວໄປນັ້ນ, ກະຊວງກະສິກຳ ແລະປ່າໄມ້ ຈະເປັນຜູ້ອອກແຈ້ງການ ຕາມຄວາມຈຳເປັນ ໃນແຕ່ລະໄລຍະ;

6. ມອບໃຫ້ ກົມປູກຝັງ, ກົມລ້ຽງສັດ ແລະການປະມົງ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ແລະດ່ານກັກກັນພືດ - ສັດ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານການນຳ ກະຊວງກະສິກຳ ແລະປ່າໄມ້ ຊາບເປັນປົກກະຕິ;

7. ຄຳສັ່ງສະບັບນີ້ ມີຜົນສັກສິດໃນທາງປະຕິບັດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ ກະຊວງກະສິກຳ ແລະປ່າໄມ້**

ລຽນ ທິແກ້ວ

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| 1. | ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ (ໃຊ້ຕາງລາຍງານ); |
| 2. | ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຊາບ); |
| 3. | ກະຊວງການເງິນ | 01 ສະບັບ (ເພື່ອຊາບ); |
| 4. | ຫ້ອງວ່າການແຂວງ, ນວ ບ່ອນລະ | 01 ສະບັບ (ເພື່ອຊ່ວຍຊຸກຍູ້); |
| 5. | ດ່ານສາກົນ ບ່ອນລະ | 01 ສະບັບ (ເພື່ອຊ່ວຍຊີ້ນຳ); |
| 6. | ຫ້ອງການກະຊວງ | 01 ສະບັບ (ເພື່ອຕິດຕາມ); |
| 7. | ບັນດາກົມອ້ອມ, ສະຖາບັນ ບ່ອນລະ | 01 ສະບັບ (ເພື່ອຊາບ); |
| 8. | ເກັບຮັກສາໄວ້ | 01 ສະບັບ. |